# ບົດຮຽນໂຮງຮຽນວັນອາທິດ

## ວັນອາທິດ ທີ 23 ພຶສຈິກາ 2008 (11-23-2008)

## ໝາກຫົວໃຈຂອງຄຣິສຕະຈັກທີ່ເຂັ້ມແຂງ

**ຂໍ້ພຣະຄັມພີໃນບົດຮຽນ:** ໂຣມ 14:1, 10-13,19-21,15:1-6

### ບົດຮຽນນີ້ສາມາດສະທ້ອນຕໍ່ຊີວິດທ່ານໄດ້ຢ່າງໃດ ?

ບົດຮຽນນີ້ສາມາດຊ່ວຍທ່ານໃຫ້ມີຄວາມແນ່ໃຈໃນຄວາມຄິດເຫັນຂອງທ່ານເຂົ້າໃນການເສີມສ້າງຄຣິສຕະຈັກຂອງທ່ານໃຫ້ເຂັ້ມແຂງແລະມີຄວາມສາມັກຄີປອງດອງກັນ.

### ບົດຮຽນນີ້ເວົ້າກ່ຽວກັບຫຍັງ:

ໂປໂລແມ່ນມີຄວາມເປັນຫ່ວງເປັນໃຍຕໍ່ຄວາມຖືກຕ້ອງປອງດອງກັນຂອງຄຣິສຕະຈັກທີ່ກຸງໂຣມ ອາດເກີດມີການແຕກແຍກກັນຖ້າວ່າຜູ້ທີ່ມີຄວາມເຊື່ອທີ່ເຂັ້ມແຂງຫາກບໍ່ມີຄວາມອົດກັ້ນຕໍ່ຜູ້ທີ່ຍັງອ່ອນໃນຄວາມເຊື່ອ. ຈຸດສົນໃຈໃນບົບຮຽນແມ່ນຢູ່ໃນຄຳສອນຂອງໂປໂລກ່ຽວກັບການທີ່ຈະເຮັດແນວໃດຜູ້ທີ່ເຊື່ອຈະມີຄວາມສາມາດປັບປຸງຄຣິສຕະຈັກຂອງຕົນໃຫ້ເຂັ້ມແຂງຝ່າຍຈິດວິນຍານ ໃນຖ້າມກາງການຖົກຖຽງກັນໃນເຣື່ອງຄວາມເຊື່ອທີ່ແຕກຕ່າງກັນ.

### ເປັນຫຍັງບົດຮຽນນີ້ຈຶ່ງມີຄວາມສຳຄັນ:

ມີສະມາຊິກຄຣິສຕະຈັກຢູ່ຫຼາຍຄົນໄດ້ນຳເອົາເຣື່ອງມາຖົກຖຽງແລະຕໍ່ສູ້ກັນເອງໃນຕົວຂອງພວກເຂົາ. ມີຈຳພວກນຶ່ງກໍແມ່ນແຍກອອກເປັນໝວດໝູ່ຕ່າງຫາກ, ມັກສ້າງບັນຫາໃຫ້ກັບຄຣິສຕະຈັກ " ການຖົກຖຽງກັນ " ແນ່ນອນຍິ່ງໄປກວ່ານັ້ນຄວາມເຂັ້ມແຂງກໍແມ່ນຄວາມເຫັນແກ່ຕົວແລະການໂຕ້ຖຽງ ເຖິງເຣື່ອງລາວທີ່ມີຄວາມສຳຄັນຫຼືບໍ່ມີຄວາມສຳຄັນ. ບົດຮຽນນີ້ໄດ້ຈັດຫາແນວຄວາມຄິດຈະເຮັດແນວໃດໃນການເສີມສ້າງແລະປັບປຸງຄຣິສຕະຈັກໃຫ້ມີຄວາມແຂງແຮງໃນຄວາມເຊື່ອ.

ນຶ່ງໃນສາຍເຫດທີ່ສາມາດເຮັດໃຫ້ຫົວໃຈມີບັນຫາແມ່ນເສັ້ນເລືອດຕັນເມື່ອຫົວໃຈມີອາການແບບນີ້ແມ່ນຈະມີການກວດສອບເບິ່ງດ້ວຍເຄື່ອງເອັກຊ໌ເຣຈຶ່ງສາມາດຊ່ວຍໃຫ້ຄົ້ນພົບວ່າມີສິ່ງໃດກີດຂວາງບໍ່ໃຫ້ເລືອດໄຫຼເຂົ້າສູ່ຫົວໃຈ ຖ້າຄົ້ນພົບວ່າແມ່ນເສັ້ນເລືອດຕັນ. ກໍຈະຫາວິທີປິ່ນປົວເພື່ອໃຫ້ເລືອດໄຫຼເຂົ້າສູ່ຫົວໃຈຢ່າງເປັນປົກກະຕິ ໃນບົດຮຽນນີ້ໄດ້ສະແດງໃຫ້ຮູ້ວ່າມີສິ່ງໃດເປັນທີ່ສຳຄັນຂອງຫົວໃຈທີ່ແຂງແຮງຂອງຜູ້ທີ່ມີຄວາມເຊື່ອແລະເປັນສ່ວນນຶ່ງໃນຄຣິສຕະຈັກ. ພວກເຮົາສາມາດຄິດເຖິງສາມບັນຫາໃຫຍ່ດ້ວຍກັນເວົ້າເຖິງການເດີນຂອງເລືອດ ຖ້າວ່າມີການຢຸດບໍ່ທຳງານຫຼືວ່າມີສິ່ງໃດສິ່ງນຶ່ງກີດຂວາງ. ໝາກຫົວໃຈຂອງເຮົາແລະຄຣິສຕະຈັກຂອງເຮົາກໍຈະບໍ່ສົມບູນແບບ ພວກເຮົາຄວນຈະພິຈາຣະນາສຶກສາໃຫ້ມີຄວາມເມດຕາຈິດໃນຈິດໃຈຂອງເຮົາ.

## ສຶກສາພຣະຄັມພີ

### 1. ຍອມຮັບຊຶ່ງກັນແລະກັນ: ( ໂຣມ 14:1, 10–12 )

ຄຣິສຕະຈັກໃນກຸງໂຣມໄດ້ມີບັນຫາກັບການບໍ່ຍອມຮັບຊຶ່ງກັນແລະກັນຂອງຄຣິສຕຽນ. ບັນຫານີ້ເກີດມີຂຶ້ນລະຫວ່າງພວກຄົນຢິວທີ່ເຊື່ອແລະຄົນຕ່າງຊາດທີ່ເຊື່ອເໝືອນກັນ, ມີຜູ້ທີ່ເຊື່ອຫລາຍຄົນທີ່ຕິດຕາມໃນຄວາມເຊື່ອ

ຂອງຄົນຊາດຢິວໄດ້ ຍຶດຖືການຢູ່ກິນ ແລະງານສລອງທາງສາສນາຢ່າງເຄັ່ງຄັດເປັນກິຈການປະຈຳວັນທີ່ສຳຄັນທີ່ສຸດ. ແມ້ກະທັ້ງວ່າພວກເຂົາໄດ້ຍອມຮັບພຣະຄຣິດເປັນພຣະຜູ້ໂຜດໃຫ້ພົ້ນຂອງເຂົາ. ພວກເຂົາບໍ່ສົມຄວນນຳເອົາຕົວຂອງເຂົາກັບການບໍ່ເອົາໃຈໃສ່ກັບການປະຕິບັດສາສນານັ້ນມາເປັນສິ່ງສຳຄັນ. ຜູ້ທີ່ເຊື່ອຄວນສັງເກດຮູ້ແລະສືບຕໍ່ປະຕິບັດຕາມທິດທາງທີ່ຈະເປັນການໃຫ້ກຽດແກ່ພຣະເຈົ້າ. ຄົນຕ່າງຊາດຜູ້ທີ່ເຊື່ອ, ເຂົາເບິ່ງບໍ່ມີເຫດຜົນທີ່ພວກເຂົາຕ້ອງຍອມຢູ່ໃຕ້ການປະຕິບັດຕາມປະເພນີທີ່ສືບທອດກັນມາຂອງຊາດຢິວ. ເຂົາໄດ້ພິຈາຣະນາເບິ່ງວ່າມັນບໍ່ໄດ້ເປັນການກະທຳຜິດຖ້າພວກເຂົາຈະກິນຊີ້ນ ຫລື ຜິດຕໍ່ການນັບຖືສາສນາຢ່າງເຄັ່ງຄັດຂອງຄົນຢິວ.

ໂປໂລໄດ້ແນະນຳວ່າຜູ້ໃດທີ່ມີຄວາມເຊື່ອເຂັ້ມແຂງກໍໃຫ້ຍອມຮັບຄົນທີ່ຍັງມີຄວາມເຊື່ອອ່ອນຢຸດໆຢ່ອນໆ. ແຕ່ລະຄົນບໍ່ໄດ້ມາຈາກທີ່ດຽວກັນເຂົາມາຈາກຖານະຂອງຄວາມເຊື່ອທີ່ແຕກຕ່າງກັນ. ບາງຄົນກໍແມ່ນເຄັ່ງຄັດທາງການປະຕິບັດ, ຈັດລະບົບແລະມີລະບຽບການປະຕິບັດຢ່າງແຈ່ມແຈ້ງ. ອີກພາກສ່ວນນຶ່ງແມ່ນຮູ້ສຶກມີຄວາມເປັນອິສຣະໃນການເຊື່ອຖືບໍ່ມີກົດບັນຍັດກີດກັ້ນ. ທັງສອງທາງແມ່ນກ້າວເຂົາສູ່ຄວາມຈິບຫາຍ, ຄົນທີ່ເຄັ່ງຄັດໃນລະບຽບວິນັຍແມ່ນງ່າຍໃນການເຂົ້າສູ່ການຕັດສິນ. ອີກຄົນນຶ່ງມີຄວາມລຽບງ່າຍໃນການຖ່ອມຕົວເຂົ້າຫາຄົນອື່ນ ແຕ່ຍັງບໍ່ເປັນຕົວຂອງຕົນເອງ.

ໂປໂລໄດ້ເຕືອນຜູ້ທີ່ອ່ານຂອງເພິ່ນວ່າ ທຸກຄົນທີ່ເຊື່ອແມ່ນເປັນຂອງພຣະຄຣິດ. ຜູ້ທີ່ຮັບໃຊ້ຂອງພຣະຄຣິດຈະບໍ່ຕັດສິນຊຶ່ງກັນແລະກັນ. ມີພຽງແຕ່ພຣະຄຣິດເທົ່ານັ້ນທີ່ມີສິດອຳນາດທີ່ຈະຕັດສິນຜູ້ຮັບໃຊ້ຂອງເພິ່ນ.

ໂປໂລໄດ້ເຕືອນອີກວ່າການວິພາກວິຈານຕໍ່ຜູ້ທີ່ເຊື່ອຄົນອື່ນໆ. ໃນຂໍ້ 10–12 ໂປໂລບໍ່ໄດ້ເວົ້າວ່າທຸກໆການປະພຶດດີແມ່ນເປັນທີ່ພໍໃຈແລະພໍພຣະທັຍພຣະເຈົ້າ ຫຼືພວກເຮົາບໍ່ແມ່ນຜູ້ຄົນຜູ້ສລາດຫລັກແຫຼມ. ເຖິງຢ່າງໃດກໍຕາມ, ພວກເຮົາບໍ່ວິພາກວິຈານຜູ້ອື່ນກ່ຽວກັບການສົງສັຍ. ພວກເຮົາແຕ່ລະຄົນຈະຢືນຢູ່ຕໍ່ໜ້າພຣະພັກຂອງພຣະເຈົ້າ. ຄວາມບາບຂອງເຮົາແມ່ນຖືກຍົກເລີກແລະພວກເຮົາຈະບໍ່ເຂົ້າສູ່ການຕາຍແຕ່ຈະມີຊີວິດຕລອດໄປ ( ໂຢຮັນ 5 : 24 ) ແມ້ກະທັ້ງວ່າເຮົາຈະເອົາການບັນທຶກການດຳລົງຊີວິດຂອງເຮົາໃຫ້ພຣະອົງ " ດ້ວຍວ່າຈຳເປັນທີ່ເຮົາທຸກຄົນຈະຕ້ອງປາກົດຕົວຕໍ່ໜ້າບັນລັງພິພາກສາຂອງພຣະຄຣິດ ເພື່ອທຸກຄົນຈະໄດ້ຮັບສົມກັບການທີ່ຕົນໄດ້ເຮັດໃນຮ່າງກາຍນີ້ວ່າຈະດີຫຼືຊົ່ວ" ( 2 ໂກລິນໂທ 5 : 10 )

ບໍ່ແມ່ນໝົດທຸກຄົນທີ່ເປັນຄຣິສຕຽນແລ້ວຈະກ່າວແຕ່ຄວາມຈິງແກ່ເຮົາ ( ມັດທາຍ 7 : 21-23 ) ເຮົາຈະເຊື່ອຢ່າງໃດແລະປະຕິບັດແນວໃດແມ່ນບໍ່ສຳຄັນທັງໝົດນັ້ນເປັນພຽງຂໍ້ຂັດແຍ້ງ. ຂ້າພະເຈົ້າໄດ້ເຫັນໃນຄຣິສຕະຈັກແລະໃນການປະຕິບັດລະຫວ່າງຜູ້ທີ່ມີຄວາມເຊື່ອ. ມີຫຼາຍຕໍ່ຫຼາຍຄົນທີ່ເລືອກເອົາການປະຕິບັດຕາມຄວາມຊອບໃຈ ຂອງຫຼັກຄວາມເຊື່ອ. ການປະຕິບັດທີ່ຖືກຕ້ອງຕໍ່ພຣະຄຣິດບໍ່ໄດ້ຂຶ້ນຢູ່ກັບທຸກຄົນວ່າຕ້ອງມັກດົນຕຣີຄືກັນ, ຕາມບົດບາດການເທດສນາອັນດຽວກັນ, ຫຼືວ່າອຸນະພູມຫ້ອງກໍຕ້ອງຄືກັນແມ່ນແຕ່ການນຸ່ງຖືກໍຕ້ອງຄືກັນຂຶ້ນຢູ່ກັບພຣະຄຸນແລະຄວາມຮັກຂອງພຣະຄຣິດ.

## 2. <u>ເສີມສ້າງຊຶ່ງກັນແລະກັນ:</u> ( ໂຣມ14:13, 19–21 )

ທ່ານຢາກຕັ້ງຕົວທ່ານຢູ່ຕ່າງຫາກຖືວ່າເປັນຄົນພິເສດແຕກຕ່າງຈາກຄົນທັງຫລາຍ, ໃຊ້ເວລາຂອງທ່ານໜູນໃຈຜູ້ອື່ນທີ່ເຊື່ອ, ບໍ່ກ່າວຂວັນນິນທາເຂົາກໍດີ. ໂປໂລໄດ້ກ່າວວ່າ ພວກເຮົາບໍ່ຄວນໃຊ້ເວລາຂອງພວກເຮົາໄປຊອກເອົາຄວາມຜິດຂອງຄົນອື່ນ. ພວກເຮົາບໍ່ຄວນສຸມໃສ່ແຕ່ສິ່ງທີ່ຈະເຮັດໃຫ້ຜູ້ເຊື່ອຂູນສະດຸດຫຼືລົ້ມລົງໃນການເດີນຕາມພຣະເຈົ້າ ແຕ່ພວກເຮົາຄວນດຳລົງຊີວິດໃນທາງທີ່ມີຜົນດີຕໍ່ຄົນອື່ນດ້ວຍ.

ໃນຂໍ້ 14-18 ໄດ້ສະແດງໃຫ້ພວກເຮົາເຫັນ, ນຶ່ງໃນຫລາຍບັນຫາໃນຄຣິສຕະຈັກໃນກຸງໂຣມ ແມ່ນກັບການບໍ່ເຫັນພ້ອມໃນການກິນແລະດື່ມ. ພຣະເຢຊູກ່າວວ່າອາຫານທຸກຊະນິດຖືກຊຳຣະແລ້ວ.( ມາຣະໂກ 7:19 ) ໂດຍເນັ້ນວ່າ, ບໍ່ແມ່ນສິ່ງທີ່ເຂົ້າໄປໃນຕົວຂອງມະນຸດທີ່ເຮັດໃຫ້ມະນຸດມີມົນທິນຫຼືວ່າດ່າງພ້ອຍ ແຕ່ສິ່ງທີ່ອອກມາຈາກໃຈຂອງມະນຸດເຮັດໃຫ້ມະນຸດເປັນມົນທິນ ( ມາຣະໂກ 7 : 15 ) . ເບິ່ງເໝືອນວ່າຊາວອິສຣາເອນທີ່ເຊື່ອຢູ່ໃນຄຣິສຕະຈັກທີ່ກຸງໂຣມ

ນັ້ນຍັງສືບຕໍ່ຄິດວ່າພວກເຂົາໄດ້ກະທຳຜິດຕໍ່ກົດຂອງການກິນດື່ມ. ພວກເຂົາໄດ້ຮູ້ສຶກວ່າເຂົາໄດ້ເປັນຄົນບາບຕໍ່ສູ້ພຣະເຈົ້າ.

ຜູ້ທີ່ແຂງແຮງໃນຄວາມເຊື່ອຕ້ອງເປັນຜູ້ລະມັດລະວັງຕໍ່ຜູ້ທີ່ອ່ອນແອ. ຜູ້ທີ່ແຂງແຮງບໍ່ເປັນຜູ້ທີ່ໃຊ້ເສຣີພາບອັນເກີນຂອບເຂດຂອງຕົນ ເພື່ອຊັກຊວນຜູ້ທີ່ອ່ອນແອໃຫ້ເຮັດໃນສິ່ງທີ່ລາວສຳນຶກໃນໃຈຂອງລາວວ່າຜິດ. ອີກໃນທຳນອງນຶ່ງກໍຄື ຜູ້ທີ່ແຂງແຮງຕ້ອງດຳລົງຊີວິດໃຫ້ເປັນແບບຢ່າງອັນດີແກ່ຄົນອື່ນ.

ໃນ ( ໂຣມ 14:19-22) ໂປໂລໄດ້ກ່າວວ່າ, ຈົ່ງສແວງຫາສິ່ງທັງຫຼາຍທີ່ເຮັດໃຫ້ເກີດຄວາມສງົບສຸກແລະເຮັດໃຫ້ເກີດຄວາມຈະເຣີນແກ່ກັນແລະກັນ.

ສຳລັບຄຣິສຕຽນແລ້ວ ການກະທຳຕາມພຣະທັມເຫຼົ່ານີ້ກໍສຳຄັນກວ່າການໃຊ້ເສຣີພາບຂອງລາວເທົ່ານັ້ນ. ພວກເຮົາຕ້ອງດຳລົງຊີວິດດ້ວຍຄວາມລະມັດລະວັງເພື່ອໃຫ້ເປັນທີ່ພູນໃຈແລະມີຜົນສະທ້ອນອັນດີແກ່ຄົນອື່ນ. ດັ່ງຕົວຢ່າງນີ້: ຂ້ອຍຢູ່ໃນເມືອງທີ່ມີໂຮງການພະນັນຫຼາຍບ່ອນ ຫຼາຍໆເທື່ອ ບ່ອນການພະນັນນີ້ຈະເອົານັກຮ້ອງທີ່ດັງໆມາຮ້ອງເພັງໃນນັ້ນທີ່ຂ້ອຍຢາກໄປຟັງດ້ວຍຄວາມມ່ວນຊື່ນ. ແຕ່ວ່າຂ້ອຍກໍບໍ່ໄດ້ໄປຟັງເຂົາ ຂ້ອຍສາມາດໄປຮ່ວມມ່ວນຊື່ນກັບການສະແດງນັ້ນໄດ້ໂດຍປາສຈາການລໍ້ລວງຕໍ່ການຫລິ້ນການພະນັນນັ້ນ, ຂ້ອຍບໍ່ໄປເພາະວ່າມັນອາດຈະເປັນການຊັກນຳໃຫ້ຜູ້ທີ່ເຊື່ອອື່ນໆ ໃຫ້ເຂົ້າໄປແລະອາດຈະຖືກລໍ້ລວງໃຫ້ຫຼິ້ນການພະນັນນັ້ນ ມັນເປັນການສ່ຽງທີ່ຍິ່ງໃຫຍ່. ຂ້ອຍອາດເປັນເຫດໃຫ້ຜູ້ທີ່ເຊື່ອອື່ນໆ ຂູນສະດຸດຕໍ່ການເປັນຄຣິສຕຽນຂອງເຂົາເຈົ້າ.

ໂປໂລບໍ່ໄດ້ເວົ້າວ່າ ຄວາມຜິດບາບທັງໝົດເປັນເຣື່ອງຄວາມຄິດເຫັນສ່ວນຕົວຂອງຜູ້ໃດຜູ້ນຶ່ງ. ເຖິງຢ່າງໃດກໍດີ ພຣະຄັມພີໄດ້ສອນຢ່າງແຈ່ມແຈ້ງແລ້ວວ່າ ຖ້າຜູ້ໃດເຮັດໃຫ້ຄົນອື່ນຂູນສະດຸດຜູ້ນັ້ນກໍໄດ້ເຮັດບາບ. ສ່ວນເຣື່ອງກ່ຽວກັບອາຫານ, ໂປໂລໄດ້ກ່າວວ່າ ອາຫານທຸກຢ່າງບໍ່ແມ່ນຂອງຕ້ອງຫ້າມກໍຈິງ ແຕ່ວ່າຖ້າຄົນໃດທີ່ກິນອາຫານຊຶ່ງເປັນເຫດໃຫ້ຜູ້ອື່ນຂູນສະດຸດໃຈຜູ້ນັ້ນກໍມີຄວາມຜິດ.

ອີກເທື່ອນຶ່ງ ຫຼັກການຄອບງຳກໍຄືເພື່ອສແວງຫາສັນຕິສຸກແລະກໍ່ສ້າງກັນແລະກັນຂຶ້ນ.

### 3. <u>ເຮັດຕາມແບບຢ່າງຂອງພຣະຄຣິດ</u> ( ໂຣມ 15:1-6 )

ຜູ້ທີ່ມີຄວາມເຊື່ອທີ່ເຂັ້ມແຂງຄວນອົດທົນຕໍ່ຄົນທີ່ມີຄວາມເຊື່ອຢຸດໆຢ່ອນໆ. ໃນພາສາກຣີກຄຳວ່າ<u>ເພື່ອຄວາມຜູກພັນ</u>ແມ່ນເປັນຄຳເວົ້າຄຳດຽວກັນກັບຄຳທີ່ວ່າເປັນໜີ້ບຸນຄຸນໃນ ( ໂຣມ 13:8 ) ດັ່ງທີ່ເຮົາເຫັນໃນບົດຮຽນວັນອາທິດທີ່ຜ່ານມາ, ຄວາມຮັກແມ່ນໜີ້ຢ່າງນຶ່ງທີ່ພວກເຮົາບໍ່ສາມາດຈ່າຍໄດ້ໝົດ ເຮັດທຸກສິ່ງທີ່ຈະນຳປໂຍດແລະຄວາມຈະເຣີນມາສູ່ຄົນທີ່ມີຄວາມເຊື່ອອ່ອນນີ້ແມ່ນສ່ວນນຶ່ງຂອງຄວາມຮັກ “ ເພື່ອນບ້ານຂອງທ່ານຄືກັບຕົວຂອງທ່ານ”
( ໂຣມ 13:9 ).

ໂປໂລໄດ້ຮຽກເອີ້ນຜູ້ອ່ານຂອງເພິ່ນໃຫ້ມີຄວາມອົດທົນຕໍ່ຜູ້ທີ່ຍັງອ່ອນແອ ນີ້ບໍ່ແມ່ນເປັນການຂໍຄວາມເມດຕາແບບງ່າຍດາຍຕໍ່ຜູ້ເຊື່ອອ່ອນ, ແຕ່ເພື່ອຊ່ອຍພວກເຂົາໃຫ້ເກີດຜົນຫຼາຍໃນຄວາມເຊື່ອ (ຄາລາເຕັຽ 6 : 2 ) ຜູ້ເຊື່ອທີ່ແຂງແຮງບໍ່ສາມາດເອົາຕົວເຂົາເອງເປັນຕົວຢ່າງໂດຍບໍ່ຄຳນຶງເຖິງຜົນທີ່ຈະຕາມມາ. ເຂົາເອງກໍຍັງມີຄວາມອ່ອນແອຢູ່ພາຍໃນ, ຕົວຢ່າງຄວາມຄິດຢ່າງນີ້ “ ຂ້າພະເຈົ້າບໍ່ສົນບໍ່ກ່ຽວກັບໃຜທີ່ຈະຄິດແນວໃດ ຂ້າພະເຈົ້າເຮັດທຸກສິ່ງທີ່ຂ້າພະເຈົ້າປາຖນາທີ່ຈະເຮັດ”. ແນວຄິດຢ່າງນີ້ຈະບໍ່ເກີດຂຶ້ນກັບຜູ້ທີ່ເຊື່ອ.

ພວກເຮົາບໍ່ໄດ້ໃຊ້ຊີວິດໃຫ້ເປັນທີ່ປາຖນາຂອງຕົວເຮົາເອງ. ພວກເຮົາໃຊ້ຊີວິດຢູ່ໂດຍໃຫ້ເປັນທີ່ຊອບໃຈຂອງເພື່ອນບ້ານຂອງເຮົາເພື່ອຄວາມດີຂອງເຂົາໃນຂໍ້ຄຳສັ່ງໃຫ້ເສີມສ້າງລາວຂຶ້ນ. ແນ່ນອນ ບໍ່ເປັນການງ່າຍທີ່ເຮົາຈະເປັນ “ ຄົນເພິ່ງພໍໃຈ ” ບໍ່ດັ່ງນັ້ນແລ້ວພວກເຮົາຈະເປັນ “ ຄົນພໍໃຈໃນຕົນເອງ ” ພວກເຮົາແມ່ນເອົາຕົວເຮົາເອງເປັນຜູ້ນຳພາໃນວິທີການທີ່ວ່າ ເອົາການປະຕິບັດຂອງເຮົາເສີມສ້າງຜູ້ທີ່ເຊື່ອຫຼາຍຄົນແລະກໍບໍ່ເຮັດໃຫ້ເຂົາຂູນສະດຸດ.

ພຣະເຢຊູຄຣິດໄດ້ນຳເອົາຕົວພຣະອົງເອງເປັນແບບຢ່າງຂອງເຮົາ. ພຣະເມຊີອາບໍ່ໄດ້ມີຊີວິດດ້ວຍຄວາມປາຖນາຂອງຕົນ . ດັ່ງນັ້ນ ພຣະບຸດຂອງພຣະເຈົ້າບໍ່ໄດ້ມາເພື່ອຕົນເອງແຕ່ມາເພື່ອປະຕິບັດເຂົາແລະຖວາຍຊີວິດຂອງຕົນເປັນ

ຄ່າໄຖ່ບາບຂອງຄົນທັງຫຼາຍ, ( ມາລາໂກ 10:45 ) ທວນຄືນເບິ່ງຄວາມພົ້ນຂອງເຮົາທີ່ຜ່ານມາເຮົາເຫັນມີຄວາມບາບແລະຄວາມອ່ອນແອຢູ່ໃນນັ້ນ. ພວກເຮົາແມ່ນຖືກບອກໃຫ້ສ້າງຄວາມສະດຸດໃຈໃຫ້ກັບຄົນອື່ນບໍ່ ຫຼື ເຮັດໃຫ້ມີໜ້ອຍທີ່ສຸດແມ່ນບໍ່ ?

ຄໍາເວົ້າດູຖູກຂອງຄົນທີ່ດູຖູກທ່ານແມ່ນຕົກຖືກຂ້ານ້ອຍ ຄໍາເວົ້ານີ້ ແມ່ນຢູ່ໃນ( ບົດເພງສັຣເສີນ 69:9 ) ພຣະຄໍາຂໍ້ນີ້ໄດ້ສັ່ງສອນແລະໃຫ້ກໍາລັງໃຈເຮົາ. ໃນພຣະຄໍາຂໍ້ດຽວກັນນີ້ຍັງສາມາດຊ່ວຍພວກເຮົາໃຫ້ມີຄວາມຫວັງ. ເຖິງຈະມີຄວາມຫຍຸ້ງຍາກກັບການເຂົ້າກັບສະຖານາການຕ່າງໆ, ໃນພຣະຄໍາຂອງພຣະເຈົ້າໄດ້ເປີດເຜີຍໃຫ້ຮູ້ວ່າຊັຍຊະນະແມ່ນ ປະສົບຜົນສໍາເຣດໂດຍຜ່ານມາທາງຜູ້ທີ່ທົນທຸກທໍຣະມານເພື່ອພຣະຄຣິດ. ເຮົາສາມາດໄດ້ຄໍາໜູນໃຈຈາກພຣະເຈົ້າວ່າຈະໃຫ້ຄວາມສໍາເຣັດຕາມທີ່ລາວປາຖນາຈະເຮັດ. ຜູ້ທີ່ເຊື່ອແມ່ນບໍ່ເຄີຍທີ່ຈະຢູ່ໃນຄວາມໝົດຫວັງ ( ໂຣມ 8 :28 ) .

ຄຣິສຕຽນດໍາລົງຢູ່ໃນການເປັນນໍານຶ່ງໃຈດຽວກັນກັບຜູ້ອື່ນແມ່ນເປັນການສັຣເສີນພຣະເຈົ້າ ແລະພຣະບິດາຂອງອົງພຣະເຢຊູຄຣິດຂອງພວກເຮົາ ກັບການຮ່ວມແຮງຮ່ວມໃຈເປັນນຶ່ງ. ຄຣິສຕຽນແມ່ນບໍ່ເຫັນຄວາມສໍາຄັນຂອງຕົນເອງຈົນລືມການໃຫ້ກຽດແກ່ພຣະເຈົ້າ. " ຈົ່ງຖວາຍກຽດແກ່ພຣະອົງໃນຄຣິສຕະຈັກແລະໃນພຣະເຢຊູຄຣິດ ທຸກຊົ່ວອາຍຸຄົນຕລອດໄປອາແມນ." ( ເອເຟໂຊ 3 : 8 ) . ຜູ້ຮັບໃຊ້ມີຈຸດມຸ້ງໝາຍໃນການເປັນຂ້ອຍໃຊ້ຂອງຄຸນຄວາມດີມີຈິດນຶ່ງໃຈດຽວກັນນໍາເອົາສະງ່າຣາສີໄປສູ່ຄວາມພົ້ນຂອງພວກເຮົາ ນອກເໜືອຈາກສິ່ງດີໆ ທີ່ກ່າວມານີ້ ບໍ່ມີສິ່ງອື່ນໃດອີກຈະເຮັດໃຫ້ຄຣິສຈັກເປັນໜ້າຮັກ.

## <u>ບົດຮຽນແຫ່ງຊີວິດ</u>

ທ່ານແມ່ນກຸນແຈດອກນຶ່ງຂອງຄຣິສຕະຈັກຂອງທ່ານ. ຖ້າເຮົາຕ້ອງການໃຫ້ຄຣິສຕະຈັກຂອງເຮົາມີຄຸນນະພາບສູງພວກເຮົາຄວນເອົາໃຈໃສ່ບໍາລຸງຄຸນນະພາບຜ່ານທາງຄວາມເຊື່ອໃນແຕ່ລະບຸກຄົນ ຈົນເຖິງທີ່ສົມບູນຢ່າງພຣະຄຣິດ. ພວກເຮົາຕ້ອງຍອມຮັບຊຶ່ງກັນແລະກັນ ເສີມສ້າງຊຶ່ງກັນແລະກັນແລະເອົາແບບຢ່າງຂອງພຣະຄຣິດ.

ຈະມີປາກົດການອັນໃດເກີດຂຶ້ນຖ້າວ່າທ່ານບໍ່ປະຕິບັດຕາມບົດຮຽນນີ້ ?

- ຕັດສິນໃຈ ຖ້າປະສົບກັບບັນຫາກັບຜູ້ທີ່ເຊື່ອອື່ນໆ ຈະເປັນການໄວ້ເນື້ອເຊື່ອໃຈແລະການນິຍົມ. ຫຼື ຄວາມຕາມໃຈຊອບຂອງຕົນເອງ.
- ຈິງໃຈໃນຄວາມຮັກແລະຍອມຮັບສະມາຊິກໃນຄຣິສຕະຈັກຂອງທ່ານ.
- ຄິດເຖິງຜູ້ທີ່ມີຄວາມເຊື່ອອ່ອນກ່ອນຈະເວົ້າສິ່ງໃດຫຼືກະທໍາສິ່ງໃດລົງໄປ.
- ເວົ້າແຕ່ຄໍາເວົ້າທີ່ເປັນການໜູນໃຈແກ່ຜູ້ທີ່ເຊື່ອດ້ວຍກັນ.
- ກາຍເປັນທີ່ພຣະພອນນໍາຄວາມຮັກຂອງພຣະຄຣິດໄປສູ່ທຸກໆຄົນ ອາແມນ.

**ອຸປຖັມໂດຍ ລາວຊາວເທີນບັບຕິສສັມພັນ www.lsbf.org by LLBC**